# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ......... ໜ້າ 01 – 04**

**II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ……………………………….ໜ້າ 05-06**

**III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ................................................ ໜ້າ 07-09**

**IV. ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງມະຫາຊົນ ຄຕພ................................ ໜ້າ 09-11**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ສິງຫາ 2022**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

**1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ**

ພັກກອມມູນິດຫວຽດນາມ ກໍຄືລັດຖະບານແຫ່ງ ສສ ຫວຽດນາມ ໄດ້ສືບຕໍ່ເຄື່ອນໄຫວວຽກງານຕ່າງປະເທດຢ່າງຕັ້ງໜ້າ ເຊັ່ນ: ວັນທີ 1/8/2022, ສະຫາຍ ຫງວຽນ ຊວັນຟຸກ, ກຳມະການກົມການເມືອງສູນກາງພັກ, ປະທານປະເທດແຫ່ງ ສສ ຫວຽດນາມ ໄດ້ຕ້ອນຮັບການຢ້ຽມຂໍ່ານັບຂອງ ທ່ານ Nikolaos Dendias, ລັດຖະມົນຕີຕ່າງປະເທດເກຣັກ ໃນໂອກາດ ຢ້ຽມຢາມ ສສ ຫວຽດນາມ ລະຫວ່າງວັນທີ 31/7-1/8/2022. ສະຫາຍ ຫງວຽນ ຊວັນຟຸກ ໄດ້ກ່າວວ່າ ການຢ້ຽມຢາມຂອງລັດຖະມົນຕີຕ່າງປະເທດເກຣັກຄັ້ງນີ້ ມີຄວາມໝາຍສຳຄັນ ເປັນການສົ່ງເສີມສາຍພົວພັນມິດຕະພາບຂອງສອງປະເທດ. ສ່ວນ ທ່ານ Dendias ໄດ້ກ່າວວ່າ ເກຣັກ ຍົກສູງບົດບາດຂອງ ສສ ຫວຽດນາມ ໃນພາກພື້ນ ແລະ ຈະສະໜັບສະໜູນ ສສ ຫວຽດນາມໃນການຮ່ວມມືກັບສະຫະພາບເອີຣົບ. ສອງຝ່າຍເຫັນດີຮ່ວມກັນໃນການແລກປ່ຽນທາງດ້ານການປ້ອງກັນປະເທດ, ການສຶກສາ, ແຮງງານ, ກະສິກຳ ແລະ ການຂົນສົ່ງທາງທະເລ.

ວັນທີ 9/8/22, ສະຫາຍ ຫວໍວັນເຖື້ອງ, ກຳມະການກົມການເມືອງ, ຜູ້ປະຈຳການຄະນະເລຂາທິການສູນກາງພັກກອມມິູດຫວຽດນາມ ໄດ້ຕ້ອນຮັບ ທ່ານ Hun Manet, ກຳມະການຄະນະປະຈຳສູນກາງພັກປະຊາຊົນກຳປູເຈຍ (CPP), ຮອງຜູ້ບັນຊາການທະຫານສູງສຸດ ແລະ ຜູ້ບັນຊາການກອງທັບບົກ ຣາຊະອານາຈັກກຳປູເຈຍ ໃນໂອກາດ ຢ້ຽມຢາມ ສສ ຫວຽດນາມ ແລະ ຮ່ວມພິທີສະເຫຼີມສະຫຼອງ ວັນສ້າງຕັ້ງສາຍພົວພັນການທູດ ຫວຽດນາມ-ກຳປູເຈຍ ຄົບຮອບ 55 ປີ. ສະຫາຍ ຫວໍວັນເຖື້ອງ ໄດ້ຕີລາຄາສູງຕໍ່ການຢ້ຽມຢາມຄັ້ງນີ້, ຊົມເຊີຍຕໍ່ບັນດາຜົນສຳເລັດທີ່ ກຳປູເຈຍ ຍາດມາໄດ້ໃນໄລຍະຜ່ານມາ, ໂດຍສະເພາະແມ່ນຜົນສຳເລັດຂອງການເລືອກຕັ້ງສະພາປະຊາຊົນຂັ້ນຕາແສງ ຊຸດທີ V ຊຶ່ງພັກປະຊາຊົນກຳປູເຈຍ ສາມາດຍາດໄດ້ໄຊຊະນະ ແລະ ເປັນການສະແດງໃຫ້ເຫັນຄວາມໄວ້ວາງໃຈຂອງປະຊາຊົນ ຕໍ່ພັກ CPP. ທ່ານ Hun Manet ໄດ້ກ່າວວ່າ ພັກ, ລັດຖະບານ ແລະ ປະຊາຊົນກຳປູເຈຍ ຂໍຂອບໃຈ ແລະ ບໍ່ມີວັນລືມ ພັກ, ລັດ, ປະຊາຊົນ ແລະ ກອງທັບປະຊາຊົນຫວຽດນາມ ທີ່ໄດ້ເສຍສະຫຼະຊີວິດເລືອດເນື້ອເຫື່ອແຮງເພື່ອຊ່ວຍເຫຼືອປະຊາຊົນກຳປູເຈຍ ຕໍ່ສູ້ປົດປ່ອຍປະເທດຊາດໃນເມື່ອກ່ອນ ແລະ ໃນພາລະກິດສ້າງສາພັດທະນາປະເທດຊາດໃນປັດຈຸບັນ.

ວັນທີ 22/8/22, ຄະນະຜູ້ແທນຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ນຳໂດຍ ສະຫາຍ ເລຮວາຍຈຸງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ໄດ້ຢ້ຽມຢາມ ແລະ ເຮັດວຽກ ຢູ່ ກຳປູເຈຍ ແລະ ໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ Hun Sen, ປະທານພັກປະຊາຊົນກຳຢູເຈຍ (CPP), ນາຍົກລັດຖະມົນຕີກຳປູເຈຍ, ທ່ານ Heng Samrin, ປະທານກິດຕິມະສັກພັກ CPP, ປະທານສະພາແຫ່ງຊາດກຳປູເຈຍ. ສະຫາຍ ເລຮວາຍຈຸງ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງການສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ຫວຽດນາມ-ກຳປູເຈຍ ຄົບຮອບ 55 ປີ, ການບໍລິຫານປະເທດຂອງລັດຖະບານ ໂດຍການນຳພາຂອງພັກ CPP ຊຶ່ງສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ເປັນຕົ້ນແມ່ນການປ້ອງກັນການແຜ່ລະບາດຂອງພະຍາດ ໂຄວິດ-19, ຟື້ນຟູເສດຖະກິດ-ສັງຄົມ, ຍາດໄດ້ໄຊຊະນະຈາກການເລືອກຕັ້ງສະພາປະຊາຊົນຂັ້ນຕາແສງ ຄັ້ງທີ V, ການເປັນປະທານໝູນວຽນອາຊຽນ. ຫວຽດນາມ ຖືສຳຄັນການພົວພັນສາມັກຄີຮ່ວມມື, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງສອງພັກ, ສອງລັດຖະບານ. ພ້ອມດຽວກັນ, ສອງຄະນະພົວພັນຕ່າງປະເທດສູນກາງພັກ ຫວຽດນາມ-ກຳປູເຈຍ ກໍໄດ້ພົບປະຫາງການ ໂດຍສອງຝ່າຍ ໄດ້ແຈ້ງໃຫ້ກັນຊາບກ່ຽວກັບສະພາບການຂອງແຕ່ລະພັກ, ແຕ່ລະປະເທດ ເປັນຕົ້ນແມ່ນວຽກງານກໍ່ສ້າງພັກ, ແລກປ່ຽນສະພາບການຂອງພາກພື້ນ ແລະ ສາກົນ.

**2). ພັກກອມມູນິດຈີນ**

ວັນທີ 31/07/2022, ສະຫາຍ ສີຈິ້ນຜິງ, ພ້ອມດ້ວຍການນຳພັກ-ລັດ ໄດ້ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປົດປ່ອຍປະຊາຊົນຈີນ ຄົບຮອບ 95 ປີ ໂດຍມີການສວນສະໜາມຂອງກຳລັງກອງທັບ, ສະແດງຍຸດໂທປະກອນການທະຫານຢ່າງຍິ່ງໃຫຍ່ ຢູ່ ຫໍສະພາປະຊາຊົນ, ນະຄອນຫຼວງປັກກິ່ງ. ສະຫາຍ ສີຈິ້ນຜິງ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານ ຄວາມສາມາດໃນການປົກປ້ອງປະເທດຊາດ ຂອງກອງທັບປົດປ່ອຍປະຊາຊົນຈີນ ຕະຫຼອດ 95 ປີຜ່ານມາ, ທັງຍໍ້າວ່າ ຕ້ອງມີຍຸດທະສາດເພີ່ມຄວາມເຂັ້ມແຂງຂອງກອງທັບ ໂດຍເພີ່ມຂີດຄວາມສາມາດຂອງບຸກຄະລາກອນທາງທະຫານ ແລະ ປ່ຽນແປງໂຄງສ້າງ, ຈັດວາງກຳລັງພົນ ຕະຫຼອດຮອດການພັດທະນາ ແລະ ຈັດວາງກຳລັງພົນໃຫ້ໜັກແໜ້ນ ເຂັ້ມແຂງກວ່າເກົ່າ ເພື່ອປະກອບສ່ວນປົກປັກຮັກສາອະທິປະໄຕຂອງ ສປ ຈີນ ໃຫ້ໝັ້ນຄົງຕະຫຼອດໄປ.

ວັນທີ 10/08/2022, ສປ ຈີນ ໄດ້ເຜີຍແຜ່ປື້ມປົກຂາວກ່ຽວກັບບັນຫາໄຕ້ຫວັນ ແລະ ຄວາມເປັນເອກະພາບຂອງຈີນໃນຍຸກສະໄໝໃໝ່, ຊຶ່ງມີເນື້ອໃນບາງຕອນວ່າ: ໄຕ້ຫວັນ ຂຶ້ນກັບປະເທດຈີນມາແຕ່ບູຮານນະການ ຊຶ່ງເປັນຄວາມຈິງຢ່າງຈະແຈ້ງໃນດ້ານປະຫວັດສາດ ແລະ ກົດໝາຍ. ມະຕິເລກທີ 2758 ປີ 1971 ຂອງສະມັດຊາໃຫຍ່ອົງການສະຫະປະຊາຊາດ ແມ່ນເອກະສານການເມືອງທີ່ສະແດງໃຫ້ເຫັນເຖິງຫຼັກການປະເທດຈີນດຽວ, ພຶດຕິກຳສາກົນໄດ້ຢັ້ງຢືນຜົນສັກສິດດ້ານກົດໝາຍ ຢ່າງເຕັມສ່ວນ, ບໍ່ອະນຸຍາດໃຫ້ມີການບິດເບືອນ. ຫຼັກການປະເທດຈີນດຽວ ແມ່ນຄວາມຮັບຮູ້ທີ່ເປັນເອກະພາບກັນໂດຍທົ່ວໄປຂອງປະຊາຄົມໂລກ. ໄຕ້ຫວັນ ເປັນພາກສ່ວນໜຶ່ງທີ່ບໍ່ສາມາດຕັດແຍກອອກຈາກຈີນ ແລະ ຈະບໍ່ມີການປ່ຽນແປງໃດໆ; ພັກກອມມູນິດຈີນ ຊຸກຍູ້ການທ້ອນໂຮມປະເທດຊາດໃຫ້ເປັນເອກະພາບໃນຍຸກໃໝ່ຢ່າງບໍ່ຢຸດຢັ້ງ.

**3). ພັກແຮງງານເກົາຫຼີ**

ວັນທີ 15/8/2022, ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ຜູ້ນຳສູງສຸດ ສປປ ເກົາຫຼີ ສົ່ງສານຕອບຂອບໃຈ ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ທີ່ໄດ້ສົ່ງສານອວຍພອນໃນໂອກາດວັນປົດປ່ອຍ ສປປ ເກົາຫຼີ ຄົບຮອບ 77 ປີ ໂດຍມີເນື້ອໃນບາງຕອນວ່າ ມິດຕະພາບ ສປປ ເກົາຫຼີ-ລັດເຊຍ ມີຄວາມແໜ້ນແຟ້ນແຕ່ສະໄໝສົງຄາມໂລກ ຄັ້ງທີ II ທີ່ສອງຝ່າຍຮ່ວມກັນຕໍ່ສູ້ຕ້ານຟາຊິດຍີ່ປຸ່ນ; ການຮ່ວມມືຂອງສອງປະເທດ ໄດ້ຮັບການເສີມຂະຫຍາຍຕະຫຼອດມາ ແລະ ເປັນຈິດໜຶ່ງໃຈດຽວຕ້ານໄພຄຸກຄາມຈາກພາຍນອກ. ຕໍ່ວິກິດການໃນຢູແກຣນ, ເມື່ອໃດທີ່ ລັດເຊຍ ຕ້ອງການ ສປປ ເກົາຫຼີ ກຽມພ້ອມຈະສົ່ງທະຫານອາສາສະໝັກ 01 ແສນຄົນ ໄປຊ່ວຍລັດເຊຍປະຕິບັດການພິເສດທາງທະຫານ.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

ເຫດການພົ້ນເດັ່ນໃນຂົງເຂດອາຊີ-ປາຊີຟິກ ໃນເດືອນ ສິງຫາ 2022 ນີ້ ແມ່ນການຢ້ຽມຢາມບັນດາປະເທດໃນອາຊີ ຂອງ ທ່ານ ນ. Nancy Pelosi, ປະທານສະພາຕໍ່າ ສ.ອາເມລິກາ ໃນລະຫວ່າງວັນທີ 1- 7/8/2022 ເຊັ່ນ: ສິງກະໂປ, ມາເລເຊຍ, ເຂດປົກຄອງ ໄຕ້ຫວັນ ຂອງ ສປ ຈີນ, ສ.ເກົາຫຼີ ແລະ ຍີ່ປຸ່ນ ຕາມລຳດັບ. ນອກຈາກນັ້ນ, ໃນວັນທີ 15/8/2022 ຄະນະຜູ້ແທນສະພາສູງອາເມລິກາ ນຳໂດຍ ທ່ານ Ed Markey, ສະມາຊິກສະພາສູງພັກເດໂມແຄັດ ໄດ້ຢ້ຽມຢາມ ໄຕ້ຫວັນ ແລະ ໄດ້ພົບປະກັບ ທ່ານ ນາງ Tsai Ing-wen, ຜູ້ບໍລິຫານເຂດປົກຄອງໄຕ້ຫວັນ. ຈຸດປະສົງຫຼັກຂອງການຢ້ຽມຢາມ ແມ່ນການຢໍ້າຄືນການຮ່ວມມືໃນຂອບນະໂຍບາຍອິນໂດ-ປາຊີຟິກ, ການຮ່ວມມືທາງດ້ານເສດຖະກິດ-ການຄ້າ ແລະ ການແຜ່ລະບາດຂອງໂຄວິດ-19. ຕໍ່ການຢ້ຽມຢາມໄຕ້ຫວັນ ຂອງປະທານສະພາຕໍ່າອາເມລິກາຄັ້ງນີ້, ສປ ຈີນ ໄດ້ຖະແຫຼງວ່າ ເປັນການລະເມີດອະທິປະໄຕ, ລະເມີດຫຼັກການຈີນດຽວ, ກະທົບຮຸນແຮງຕໍ່ສາຍພົວພັນສອງຝ່າຍ ແລະ ໄດ້ຕອບໂຕ້ດ້ວຍການຊ້ອມຮົບອ້ອມຮອບໃນເຂດຊ່ອງແຄບໄຕ້ຫວັນ ທັງໝົດ 6 ຈຸດ ນັບແຕ່ວັນທີ 4-15/8/2022 ແລະ ເພີ່ມກຳລັງທະຫານໃນຂົງເຂດດັ່ງກ່າວ, ທັງໄດ້ເຕືອນບໍ່ໃຫ້ເຮືອບິນຂົນສົ່ງຜູ້ໂດຍສານບິນຜ່ານເຂດຊ້ອມຮົບ; ສັ່ງລະງັບການນຳເຂົ້າສິນຄ້າ ຈາກບໍລິສັດສົ່ງອອກຂອງ ໄຕ້ຫວັນ 35 ແຫ່ງ ຈາກທັງໝົດ 107 ແຫ່ງ ທີ່ຈົດທະບຽນກັບ ສປ ຈີນ; ສັ່ງລະງັບການນຳເຂົ້າອາຫານຈາກບໍລິສັດ 2066 ແຫ່ງ ຈາກທັງໝົດ 3200 ແຫ່ງ ແລະ ໂຈະການຮ່ວມມືກັບອາເມລິກາໃນ 8 ຂະແໜງການຄື: ໂຈະການແລກປ່ຽນຄະນະຜູ້ແທນຂັ້ນສູງ

ຂອງສອງກອງທັບ; ການຮ່ວມມືປະສານງານດ້ານນະໂຍບາຍປ້ອງກັນປະເທດ; ກອງປະຊຸມປຶກສາຫາລືທາງທະເລລະຫວ່າງທະຫານ; ການຮ່ວມມືໃນການສົ່ງຜູ້ເຂົ້າເມືອງຜິດກົດໝາຍ; ການຮ່ວມມືກ່ຽວກັບການຊ່ວຍເຫຼືອດ້ານກົດໝາຍອາຍາ; ການຮ່ວມມືໃນການຕ້ານອາຊະຍາກໍາຂ້າມຊາດ; ການຮ່ວມມືກ່ຽວກັບການປາບປາມຢາເສບຕິດ ແລະ ການຮ່ວມມືກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ. ອີງການສະຫະປະຊາຊາດ, ລັດຖະບານ 100 ກວ່າປະເທດໃນໂລກ ລວມທັງປະເທດໃນສະຫະພາບເອີຣົບ, ອາຊີ ລວມທັງ ສປປ ລາວ, ພັກການເມືອງ, ນັກການເມືອງ ແລະ ນັກຄົ້ນຄວ້າຈໍານວນຫຼາຍ ໄດ້ອອກຖະແຫຼງການຄຽງຂ້າງ ສປ ຈີນ, ສະໜັບສະໜູນຫຼັກການຈີນດຽວ, ເຄົາລົບອະທິປະໄຕຂອງຈີນ; ການຢ້ຽມຢາມດັ່ງກ່າວ ເປັນການລະເມີດອະທິປະໄຕ, ລະເມີດຫຼັກການຈີນດຽວ, ເຊິ່ງຈະນໍາໄປສູ່ການເກາະຜິດໃນປັດຈຸບັນ ແລະ ຕໍ່ໜ້າ; ສະໜັບສະໜູນການໂຮມປະເທດຊາດຂອງຈີນ; ທຸກປະເທດ ຄວນເຄົາລົບໃນຫຼັກການບໍ່ແຊກແຊງກິດຈະການພາຍໃນຂອງກັນ ແລະ ກັນ, ຕ່າງຝ່າຍ ຕ່າງມີຜົນປະໂຫຍດ, ຢູ່ຮ່ວມກັນໂດຍສັນຕິ ເພື່ອສັນຕິພາບໃນພາກພື້ນ ແລະ ໃນໂລກ.

ສະພາບການເມືອງໄທໃນປັດຈຸບັນ ພວມເຄັ່ງຕຶງ, ເຊິ່ງຄະນະສານລັດຖະທໍາມະນູນໄທ ໄດ້ເຫັນດີຮັບເອົາຄໍາຮ້ອງຂອງພັກຮ່ວມຝ່າຍຄ້ານ ທີ່ນໍາໂດຍ ພັກເພື່ອໄທ ກ່ຽວກັບການດໍາລົງຕໍາແໜ່ງນາຍົກລັດຖະມົນຕີຂອງ ທ່ານ ປະຢຸດ ຈັນໂອຊາ ຄົບຮອບ 8 ປີ ໃນວັນທີ 24/8/2022. ໂດຍ ສານລັດຖະທໍາມະນູນໄທ ໄດ້ເຫັນດີ 5 ຕໍ່ 4 ສຽງ ໃຫ້ທ່ານ ປຣະຢຸດ ຈັນໂອຊາ ຢຸດຕິການປະຕິບັດໜ້າທີ່ຊົ່ວຄາວ ແລະ ແຕ່ງຕັ້ງ ທ່ານ ປຣະຫວິດ ວົງສຸວັນ, ຮອງນາຍົກລັດຖະມົນຕີ ຂຶ້ນມາຮັກສາການນາຍົກລັດຖະມົນຕີ ຈົນກວ່າຈະມີການຕັດສິນເດັດຂາດຈາກສານລັດຖະທໍາມະນູນ. ສ່ວນ ທ່ານ ປະຢຸດ ຈັນໂອຊາ ຍັງສາມາດເຄື່ອນໄຫວໃນຄະນະລັດຖະບານໄດ້ ໃນຕໍາແໜ່ງລັດຖະມົນຕີປ້ອງກັນປະເທດ. ໃນຂະນະທີ່ ພັກຝ່າຍຄ້ານ ໄດ້ນໍາພາປະຊາຊົນຈໍານວນໜຶ່ງ ໂຮມກັນຊຸມນຸມ ປະທ້ວງໃຫ້ ທ່ານ ປຣະຢຸດ ຈັນໂອຊາ ອອກຈາກຕໍາແໜ່ງນາຍົກລັດຖະມົນຕີຢ່າງສົມບູນ, ປະຕິເສດນາຍົກຄົນໃດກໍຕາມທີ່ມາຈາກລັດຖະປະຫານ, ຮຽກຮ້ອງໃຫ້ຍຸບສະພາ ແລະ ຈັດການເລືອກຕັ້ງເອົານາຍົກລັດຖະມົນຕີຄົນໃໝ່ ຢ່າງມີປະຊາທິປະໄຕ.

ການເມືອງຍີ່ປຸ່ນ: ພາຍຫຼັງ ພັກເສລີປະຊາທິປະໄຕຍີ່ປຸ່ນ ໄດ້ຮັບໄຊຊະນະໃນການເລືອກຕັ້ງສະພາສູງຍີ່ປຸ່ນ ໃນວັນທີ 10/7/2022 ຜ່ານມາ, ວັນທີ 10/8/2022, ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ປະກາດການປັບປຸງຄະນະລັດຖະບານຊຸດໃໝ່ ທັງໝົດ 14 ທ່ານ ໂດຍຮັກສາໄວ້ 5 ລັດຖະມົນຕີຄົນເກົ່າເຊັ່ນ: ຫົວໜ້າເລຂາທິການລັດຖະບານ; ລັດຖະມົນຕີກະຊວງການຕ່າງປະເທດ; ລັດຖະມົນຕີກະຊວງການເງິນ; ລັດຖະມົນຕີກະຊວງທີ່ດິນໂຄງລ່າງພື້ນຖານຄົມມະນາຄົມ ແລະ ການທ່ອງທ່ຽວ ແລະ ລັດຖະມົນຕີຟື້ນຟູເສດຖະກິດ. ແຕ່ງຕັ້ງລັດຖະມົນຕີໃໝ່ 9 ທ່ານຄື: ລັດຖະມົນຕີກະຊວງພາຍໃນ ແລະ ການສື່ສານ; ລັດຖະມົນຕີກະຊວງຍຸດຕິທໍາ; ລັດຖະມົນຕີກະຊວງສິ່ງແວດລ້ອມ; ລັດຖະມົນຕີກະຊວງການຟື້ນຟູ; ລັດຖະມົນຕີກະຊວງສຶກສາ, ວັດທະນະທໍາ, ກິລາ, ວິທະຍາສາດ ແລະ ເຕັກໂນໂລຊີ; ລັດຖະມົນຕີກະຊວງກະສິກໍາ, ປ່າໄມ້ ແລະ ການປະມົງ; ລັດຖະມົນຕີຟື້ນຟູພາກພື້ນວຽກງານຊາຍແດນພາກເໜືອ ແລະ ເຂດໂອກິນາວາ; ລັດຖະມົນຕີຮັບຜິດຊອບອັດຕາການເກີດຂອງເດັກນ້ອຍ ແລະ ສິ່ງເສີມເພດຍິງ ແລະ ປະທານສະພາຄວາມປອດໄພສາທາລະນະແຫ່ງຊາດທາງດ້ານການຄຸ້ມຄອງໄພພິບັດ. ທັງໝົດແມ່ນມາຈາກກຸ່ມ Aso ແລະ ກຸ່ມ Abe ກຸ່ມລະ 4 ທ່ານ; ມາຈາກກຸ່ມ Kishida, ແລະ ກຸ່ມ Motegi ກຸ່ມລະ 3 ທ່ານ; ຈາກກຸ່ມ Nikai ແລະ ບໍ່ໄດ້ສັງກັດກຸ່ມໃດ 2 ທ່ານ ແລະ ຈາກກຸ່ມ Komeito 1 ທ່ານ.

ໃນອາຊຽນ: ລະຫວ່າງວັນທີ 30/7/-6/8/2022, ກໍາປູເຈຍ ໄດ້ເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 55 ໂດຍການເຂົ້າຮ່ວມຂອງລັດຖະມົນຕີຕ່າງປະເທດອາຊຽນ (ຍົກເວັ້ນ ມຽນມາ ທີ່ປະຕິເສດບໍ່ເຂົ້າຮ່ວມ) ພ້ອມດ້ວຍລັດຖະມົນຕີຕ່າງປະເທດ ຈາກ 38 ປະເທດ ຖືກເຊີນເຂົ້າຮ່ວມ ເຊັ່ນ: ສປ ຈີນ, ລັດເຊຍ, ສ.ອາເມລິກາ ແລະ ສະຫະພາບເອີຣົບ. ກອງປະຊຸມ ໄດ້ປຶກສາຫາລືຫຼາຍບັນຫາເຄັ່ງຮ້ອນໃນພາກພື້ນ ແລະ ສາກົນ, ສະພາບມຽນມາ, ໄຕຫວັນ, ການພັດທະນາແບບຍືນຍົງ, ສະພາບເສດຖະກິດ ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ອື່ນໆ; ກອງປະຊຸມເຫັນດີທົບທວນຄືນຄວາມຄືບໜ້າກ່ຽວກັບການເພີ່ມທະວີການສ້າງປະຊາຄົມອາຊຽນ, ການຊຸກຍູ້ການເຊື່ອມໂຍງໃນພາກພື້ນ, ການຮ່ວມມືລະຫວ່າງ ອາຊຽນ ກັບຄູ່ຮ່ວມມືພາຍນອກ; ຈະສຸມໃສ່ການຮັບປະກັນການຮ່ວມມືທາງດ້ານເສດຖະກິດຮອບດ້ານໃນພາກພື້ນ (RCEP) ເພື່ອຍົກສູງແຮງດຶງດູດທາງດ້ານ

ການຄ້າ ແລະ ການລົງທຶນໃນໂລກ; ພ້ອມກັນຮັບຮອງເອກະສານກ່ຽວກັບການຮ່ວມມືໃນພາກພື້ນ 30 ສະບັບ ໃນຂົງເຂດການເມືອງ, ເສດຖະກິດ-ສັງຄົມ ແລະ ວັດທະນະທຳ. ພ້ອມນີ້, ອາຊຽນ ຍັງໄດ້ເຊັນສັນຍາມິດຕະພາບ ແລະ ການຮ່ວມມືກັບດານມາກ, ເກຣັກ, ໂຮນລັງ, ໂອມານ, ກາຕາ ແລະ ອາຣັບບີ ຊາອຸດີດ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ຄວາມຂັດແຍ່ງໃນອູແກຣນ ຍັງສືບຕໍ່ເປັນບັນຫາທີ່ປະຊາຄົມໂລກໃຫ້ຄວາມສົນໃຈ, ເຊິ່ງການປະຕິບັດການພິເສດທາງທະຫານຂອງລັດເຊຍ ໃນເດືອນ ສິງຫາ 2022 ແມ່ນສາມາດຍຶດແຄວ້ນໂດເນັດສ ໃນເຂດ ດອນບັດສ ທາງພາກຕາເວັນອອກຂອງອູແກຣນ ໄດ້ທັງໝົດແລ້ວ, ສຸມໃສ່ການປະຕິການທາງພາກໃຕ້ຂອງອູແກຣນ ໂດຍສະເພາະເມືອງ ມີໂລ ຄາອິບ, ເມືອງເຄີເຊີນ, ປ້ອງກັນການໂຈມຕີໂຮງງານໄຟຟ້ານິວເຄຼຍ Zaporizhia ຂອງທະຫານອູແກຣນຢູ່ເມືອງ Inerhodar. ນອກຈາກນັ້ນ, ລັດເຊຍ ໄດ້ລົງນາມໃນດຳລັດວ່າດ້ວຍ ການຍົກລະດັບປະສິດທິພາບຂອງກອງທັບເຮືອລັດເຊຍ ໂດຍມີການຕິດຕັ້ງລູກສອນໄຟ Zircon ທີ່ມີຄວາມໄວເໜືອສຽງ 9 ເທົ່າ ໃຫ້ກັບເຮືອຮົບ Admiral Gorshkov ຂອງລັດເຊຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກອງທັບລັດເຊຍ, ຮັບປະກັນອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລັດເຊຍ; ລັດເຊຍ ຍັງໄດ້ເປີດພິທີວາງສະແດງເຕັກນິກການທະຫານສາກົນປະຈຳປີ 2022 ຢູ່ ຖານທັບ Kubinka, ທີ່ ນະຄອນຫຼວງມົດສະກູ ໃນລະຫວ່າງວັນທີ 15-22/8/2022 ໂດຍການເຂົ້າຮ່ວມຂອງ ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ແລະ ມີຄຳເຫັນວ່າ: ລັດເຊຍ ກຽມພ້ອມສະໜັບສະໜູນອາວຸດທີ່ທັນສະໄໝ ໃຫ້ກັບບັນດາປະເທດທີ່ເປັນມິດກັບລັດເຊຍໃນທົ່ວໂລກ. ສຳລັບການຫຼຸດຜ່ອນຄວາມເສຍຫາຍດ້ານເສດຖະກິດ, ພາຍຫຼັງການເຊັນຂໍ້ຕົກລົງ ລະຫວ່າງ ລັດເຊຍ ແລະ ອູແກຣນ ວັນທີ 22/7/2022 ຜ່ານມາ, ວັນທີ 1/8/2022 ເຮືອບັນທຸກຜົດພັນທັນຍາຫານຂອງອູແກຣນໄດ້ເດີນທາງອອກຈາກທ່າເຮືອ ຜ່ານທະເລດຳ ໄປຍັງຕ່າງປະເທດ ເພື່ອແກ້ໄຂວິກິດການເສດຖະກິດສາກົນ; ລັດເຊຍ ໄດ້ສົ່ງອາຫານທີ່ຈຳເປັນໄປໃຫ້ ສປ Donetsk ແລະ ສປ Luhanks ແລະ ເຂດອື່ນໆຂອງ ອູແກຣນ ຈຳນວນ 466 ກວ່າໂຕນ. ຮອດປັດຈຸບັນ, ລັດເຊຍ ສົ່ງການຊ່ວຍເຫຼືອດ້ານມະນຸດສະທຳໃຫ້ ອູແກຣນ ຫຼາຍກວ່າ 58.000 ໂຕນ.

ວັນທີ 17/8/2022, ອູແກຣນ ໄດ້ເປີດການໂຈມຕີຂະໜາດໃຫຍ່ດ້ວຍອາວຸດໜັກເປັນຕົ້ນ ໂດຣນ, ລູກສອນໄຟ, ປືນໃຫຍ່ ແລະ ອາວຸດອື່ນໆ ໃນເມືອງ Energoder ແລະ ເຂດ Zaporozhye. ພ້ອມທັງສ້າງຕັ້ງສູນວິກິດເພື່ອຮັບມືກັບສະຖານະການສຸກເສີນທີ່ອາດເກີດຂຶ້ນຢູ່ໂຮງງານໄຟຟ້າ Zaporizhia ທາງພາກໃຕ້ຂອງ ອູແກຣນ ແລະ ໃນວັນດຽວກັນ ທ່ານ Antoni Guterres, ເລຂາທິການໃຫຍ່ ສປຊ ໄດ້ເດີນທາງຢ້ຽມຢາມ ອູແກຣນ ເພື່ອປຶກສາຫາລືບັນຫາເຄັ່ງຮ້ອນໃນເຂດໂຮງງານໄຟຟ້າ Zaporizhia. ອູແກຣນ ໄດ້ປະກາດເລື່ອນການຊຳລະເງິນຕາຕ່າງປະເທດໃຫ້ແກ່ປະເທດເຈົ້າໜີ້ ອີກສອງປີ ພ້ອມທັງຈະພິມພັນທະບັດເພີ່ມເພື່ອທຸ່ມເງິນໃສ່ໃນວຽກງານການທະຫານຕ້ານກັບລັດເຊຍ, ໂດຍປະທານາທິບໍດີ ອູແກຣນ ອ້າງວ່າການຊ່ວຍເຫຼືອອາວຸດຈາກ EU ແລະ ອາເມລິກາ ຊັກຊ້າ.

ແນວໃດກໍຕາມ, ສ.ອາເມລິກາ ແລະ ພັນທະມິດຕາເວັນຕົກ ສືບຕໍ່ສະໜັບສະໜູນທາງການທະຫານໃຫ້ ອູແກຣນ ໂດຍ ສ.ອາເມລິກາ ຈະສະໜອງທຶນ ຕື່ມອີກ 3 ຕື້ໂດລາ ລວມທັງລະບົບລູກສອນໄຟ HIMARS, ໂດຣນ ທຳລາຍລ້າງສູງ, ລົດຕັງ Javelin 1.000 ຄັນ, ລົດແພດເຄື່ອນທີ່ 50 ຄັນ ແລະ ລູກປືນຂະໜາດ 155 ມມ. ຮອດປັດຈຸບັນ ອາເມລິກາ ໄດ້ສະໜອງງົບປະມານ ແກ່ອູແກຣນ ລວມເປັນ 10,6 ຕື້ໂດລາ. ນູແວນເຊລັງ ກໍຈະສົ່ງທະຫານ 120 ຄົນ ຊ່ວຍຝຶກໃຫ້ກັບທະຫານ ອູແກຣນ ຢູ່ ອັງກິດ. ນອກຈາກນັ້ນ, ລັດຖະສະພາ ສ.ອາເມລິກາ ໄດ້ພິຈາລະນາຍັດຕິກ່າວຫາວ່າ ລັດເຊຍ ເປັນປະເທດທີ່ສະໜັບສະໜູນການກໍ່ການຮ້າຍ, ເຊິ່ງກຳລັງສະເໜີໃຫ້ກະຊວງການຕ່າງປະເທດອາເມລິກາ ເພື່ອປະກາດການປະຕິບັດຍັດຕິດັ່ງກ່າວ ຢ່າງເປັນທາງການ, ລັດເຊຍ ໄດ້ຕອບໂຕ້ວ່າ ຫາກມີການກຳນົດທາງການແທ້, ລັດເຊຍ ຈະຕັດສາຍພົວພັນການທູດກັບ ສ.ອາເມລິກາ ຢ່າງສົມບູນ.

**ແຫຼ່ງຂ່າວອ້າງອີງ** :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, CRI, Khmer Times, RT, Kpl, Lao National Radio, Sputnik, Yonhap, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ສະຖານທູດລາວຢູ່ລັດເຊຍ, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ

1. **ເລຂາທິການໃຫຍ່ພັກ ປປ ລາວ ສົ່ງສານສະແດງຄວາມເຫັນໃຈ ເຖິງເລຂາທິການທີໜຶ່ງ ພັກກອມມູນິດກູບາ ຕໍ່ເຫດການ ສາງເກັບນ້ຳມັນ ຂອງກູບາ ລະເບີດ**

ໃນວັນທີ 08 ສິງຫາ 2022, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫ່ຍຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ສົ່ງສານສະແດງຄວາມເຫັນໃຈ ເຖິງ ສະຫາຍ ມີເກັນດີເອັດສ-ກາແນນ ແບຣມູເດັດສ, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດແຫ່ງ ສາທາລະນະລັດກູບາ ຕໍ່ເຫດການສາງນ້ຳມັນໃນເຂດອຸດສະຫະກຳ Supertanker ແຂວງ Matanzas ໄດ້ເກີດເຫດລະເບີດເປັນໄຟລຸກໄໝ້ ຍ້ອນຖືກຟ້າຜ່າ, ຊຶ່ງໄດ້ສ້າງຄວາມເສຍຫາຍ ຢ່າງໃຫຍ່ຫຼວງຕໍ່ເຂດອຸດສາຫະກຳດັ່ງກ່າວ, ສ້າງຄວາມສະເທືອນໃຈ ແລະ ສົ່ງຜົນກະທົບຕໍ່ຊີວິດ ແລະ ຊັບສິນ ຂອງປະຊາຊົນກູບາອ້າຍນ້ອງ.

ໃນນາມ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ລັດຖະບານ ແລະ ປະຊາຊົນລາວ ກໍ່ຄືໃນນາມສ່ວນຕົວ, ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມເຫັນອົກເຫັນໃຈຢ່າງຍິ່ງ ແລະ ຂໍແບ່ງເບົາຄວາມເສົ້າໂສກເສຍໃຈ ໄປຍັງ ພັກ, ລັດຖະບານ, ປະຊາຊົນກູບາອ້າຍນ້ອງ ກໍຄືຄອບຄົວຂອງຜູ້ທີ່ໄດ້ຮັບເຄາະຮ້າຍຈາກເຫດການດັ່ງກ່າວ; ເຊື່ອໝັ້ນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງສະຫາຍ, ພັກ, ລັດຖະບານ ແລະ ປະຊາຊົນກູບາອ້າຍນ້ອງ ຈະສາມາດຜ່ານຜ່າຄວາມຫຍຸ້ງຍາກທີ່ເກີດຂຶ້ນຈາກເຫດການຄັ້ງນີ້ ແລະ ຟື້ນຟູເຂດທີ່ໄດ້ຮັບຜົນກະທົບໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ.

2. **ເລຂາທິການໃຫຍ່ ພັກ ປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ລັດຖະມົນຕີປ້ອງກັນຄວາມສະຫງົບ ຫວຽດນາມ**



ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະຜູ້ແທນຂັ້ນສູງກະຊວງປ້ອງກັນຄວາມສະຫງົບ (ປກສ) ແຫ່ງ ສສ ຫວຽດນາມ ນຳໂດຍສະຫາຍ ພົອ ໂຕ ເລິມ, ກຳມະການກົມການເມືອງສູນກາງ ພັກກອມມູນິດຫວຽດນາມ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ສສ ຫວຽດນາມ ໃນວັນທີ 24 ສິງຫາ 2022 ໃນໂອກາດຢ້ຽມຢາມສັນຖະວະໄມຕີ ແລະ ພົບປະກັບກະຊວງປ້ອງກັນຄວາມສະຫງົບ ສປປ ລາວ ໃນລະຫວ່າງວັນທີ 24-27 ສິງຫາ 2022. ສະຫາຍ ພົອ.ໂຕ ເລິມ ໄດ້ຕາງ

ໜ້າຄະນະຜູ້ແທນ ນຳເອົາຄວາມຢື້ຢາມຖາມຂ່າວ, ຄວາມຮັກແພງສາມັກຄີອັນສະໜິດແໜ້ນ ຈາກການນຳ ພັກ-ລັດ ຂອງ ສສ ຫວຽດນາມ ມາເຖິງປະທານປະເທດ ພ້ອມດ້ວຍການນຳພັກ-ລັດ ແລະ ປະຊາຊົນລາວ, ພ້ອມທັງໄດ້ລາຍງານ ຈຸດປະສົງ ໃນການເດີນທາງເຄື່ອນໄຫວຢ້ຽມຢາມສັນຖະວະໄມຕີ ສປປ ລາວ ຄັ້ງນີ້ ໃຫ້ປະທານປະເທດ ແຫ່ງ ສປປ ລາວ ຮັບຊາບ. ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມຕ້ອນຮັບ ແລະ ຊົມເຊີຍຕໍ່ຄະນະນຳກະຊວງປ້ອງກັນຄວາມສະຫງົບ ສສ ຫວຽດນາມ ໃນການມາຢ້ຽມຢຽມສັນຖະວະໄມຕີ ແລະ ເຮັດວຽກຢູ່ ສປປ ລາວ, ເວົ້າສະເພາະ ກໍແມ່ນ ການເຮັດວຽກຮ່ວມກັບ ກະຊວງ ປກສ ແຫ່ງ ສປປ ລາວ; ເນັ້ນໜັກໃຫ້ສອງກຳລັງ ສືບຕໍ່ເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອ ລະຫວ່າງ ລາວ-ຫວຽດນາມ ໃຫ້ໝັ້ນຄົງຂະນົງແກ່ນ, ສືບຕໍ່ຮັດແໜ້ນສາຍພົວພັນແບບພິເສດ-ການຮ່ວມມືຮອບດ້ານ ໃຫ້ເລິກເຊິ່ງ, ກວ້າງຂວາງ, ສຸມໃສ່ພັດທະນາສອງກຳລັງປ້ອງກັນຄວາມສະຫງົບ ລາວ-ຫວຽດນາມ ໃຫ້ເຕີບໃຫຍ່ເຂັ້ມແຂງ, ຮັບປະກັນໃຫ້ສອງປະເທດ ລາວ-ຫວຽດນາມ ມີຄວາມສະຫງົບປອດໄພ, ປະຊາຊົນສອງຊາດ ໄປມາຫາສູ່ກັນຢ່າງສະດວກສະບາຍ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຄະນະພົວພັນຕ່າງປະເທດສູນກາງພັກ ເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງພັກ - ລັດ






ວັນທີ 23 ສິງຫາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດປາຖະກະຖາເຊື່ອມຊຶມເອກະສານສຳຄັນຂອງພັກ-ລັດຄື: ວັນຍຶດອຳນາດທົ່ວປະເທດ 23 ສິງຫາ ປີ 1945 ແລະ ປີ 1975; ມະຕິກອງປະຊຸມຄົບຄະນະບໍລິຫານງານພັກ ຄັ້ງທີ 4 ສະໄໝທີ XI; ວັນລັດຖະທຳມະນູນ ແຫ່ງ ສປປລາວ ຄົບຮອບ 31 ປີ; ວັນສ້າງຕັ້ງອາຊຽນ ຄົບຮອບ 55 ປີ ໂດຍໃຫ້ກຽດເປັນປະທານ ແລະ ເຜີຍແຜ່ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍໃນຄະນະບໍລິຫານງານພັກ, ສະມາຊິກພັກ, ພະນັກງານ ທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ຫົວໜ້າ ຄຕພ ໄດ້ທວນຄືນມູນເຊື້ອການຕໍ່ສູ້ກູ້ຊາດອັນພິລະອາດຫານ ຂອງປະຊາຊົນລາວບັນດາເຜົ່າ ເພື່ອໃຫ້ພະນັກງານ, ສະມາຊິກພັກໄດ້ມີຄວາມເຂົ້າໃຈ ເຖິງຄວາມເສຍສະຫຼະ, ຄວາມສາມັກຄີຂອງປວງຊົນລາວທັງຊາດ ບວກກັບນ້ຳໃຈຮັກຊາດ ຮັກບ້ານເກີດເມືອງນອນ ຂອງການນຳປະຕິວັດຮຸ່ນອາວຸໂສ ພາຍໃຕ້ການນຳພາ ອັນສະຫຼາດສ່ອງໃສຂອງພັກ ໃນແຕ່ລະໄລຍະເປັນກ້າວໆມາ ຈົນໄດ້ຮັບໄຊຊະນະ ແລະ ສະຖາປະນາ ສປປລາວ ໃນວັນທີ 02 ທັນວາ 1975. ສະຫາຍ ຫົວໜ້າ ຄຕພ ສືບຕໍ່ຍົກໃຫ້ເຫັນເນື້ອໃນສຳຄັນຂອງມະຕິຂອງສູນກາງພັກ ຄັ້ງທີ 4 ສະໄໝທີ XI ເປັນຕົ້ນແມ່ນ: ຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ຕົ້ນປີ 2022 ຕິດພັນກັບຜົນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ ແລະ ວ່າດ້ວຍ ການແກ້ໄຂບັນຫາຢາເສບຕິດ; ສາມາດຮັບປະກັນສະຖຽນລະພາບ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ສະຫາຍຫົວໜ້າ ຄຕພ ຍົກໃຫ້ເຫັນຄວາມສຳຄັນຂອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ ເຊິ່ງ ລັດຖະທຳມະນູນແມ່ນໝາກຜົນລວມຍອດ ຂອງການປະຕິວັດຊາດປະຊາທິປະໄຕປະຊາຊົນ ພາຍໃຕ້ການນຳພາຂອງພັກ, ເປັນຜົນງານໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ແລະ ຢືນຢັນເຖິງ ຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດລາວ; ແນໃສ່ສ້າງລັດເຮົາເປັນລັດທີ່ ຄຸ້ມຄອງດ້ວຍກົດໝາຍ ເພື່ອປົກປ້ອງສິດທິອັນຊອບທຳ ແລະນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນລາວບັນດາເຜົ່າ. ສຳລັບວັນສ້າງຕັ້ງອາຊຽນ, ສະຫາຍຫົວໜ້າ ຄຕພ ໄດ້ທວນຄືນປະຫວັດຄວາມເປັນມາຂອງອາຊຽນ, ການສ້າງປະຊາຄົມອາຊຽນ, ການເຄື່ອນໄຫວຮ່ວມມືຂອງອາຊຽນ ໃນແຕ່ລະໄລຍະ, ຍົກໃຫ້ເຫັນຜົນປະໂຫຍດ ຂອງ ສປປລາວ ໃນຂອບການຮ່ວມມືດັ່ງກ່າວ ແລະ ສິ່ງທ້າທາຍທີ່ປະເທດເຮົາ ຈະຕ້ອງປັບຕົວໃນການພົວພັນຮ່ວມມືກັບວົງສາຄະນາຍາດສາກົນ.

**2. ຄະນະພົວພັນຕ່າງປະເທດສູນກາງພັກ ຈັດກອງປະຊຸມສະຫຼຸບວຽກງານການເຄື່ອນໄຫວຕ່າງປະເທດ ຂອງພັກ ແລະ ການທູດປະຊາຊົນ ປະຈຳ 06 ເດືອນຕົ້ນປີ 2022**




ວັນທີ 24 ສິງຫາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນການເຄື່ອນໄຫວວຽກງານຕ່າງປະເທດ ຂອງບັນດາອົງການພັກ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ບັນດາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ບັນດາສະມາຄົມມິດຕະພາບລາວກັບຕ່າງປະເທດ ປະຈຳ 06 ເດືອນຕົ້ນປີ 2022 ແລະ ວາງທິດທາງແຜນການໃນທ້າຍປີ 2022 ໂດຍການໃຫ້ກຽດເປັນປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນ

ຕ່າງປະເທດສູນກາງພັກ ແລະ ມີຕາງໜ້າບັນດາຄະນະນຳ, ຄະນະກົມ ແລະ ພະນັກງານຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ເຂົ້າຮ່ວມຈຳນວນ 50 ສະຫາຍ. ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ແລກປ່ຽນຄວາມຄິດເຫັນ, ຕີລາຄາ ດ້ານດີ, ຍົກໃຫ້ເຫັນດ້ານຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ໃນໄລຍະຜ່ານມາ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຕ່າງປະເທດ ຂອງພັກ ແລະ ການທູດປະຊາຊົນ, ໂດຍເນັ້ນເຖິງຄວາມສຳຄັນ ແລະ ຈຳເປັນໃນການເພີ່ມທະວີການເປັນເສນາທິການໃຫ້ແກ່ສູນກາງພັກ ໃນການເຄື່ອນໄຫວວຽກງານຕ່າງປະເທດ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກວາງອອກ ໃນທ່າມກາງສະພາບການຢູ່ພາກພື້ນ ແລະ ສາກົນ ສືບຕໍ່ມີການປ່ຽນແປງຢ່າງໄວວາ ແລະ ສະຫຼັບຊັບຊ້ອນ ຄາດຄະເນໄດ້ຍາກ ມີທັງສິ່ງທ້າທາຍໃໝ່ຫຼາຍປະການເກີດຂຶ້ນ.

ໃນຕອນທ້າຍ, ສະຫາຍ ປະທານ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານ, ຜົນສຳເລັດທີ່ສຳຄັນຂອງການເຄື່ອນໄຫວການຕ່າງປະເທດຂອງພັກ ແລະ ການທູດປະຊາຊົນ ທີ່ຍາດມາໄດ້ໃນໄລຍະຜ່ານມາ ພ້ອມທັງຮຽກຮ້ອງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງສືບຕໍ່ເປັນເຈົ້າການຈັດຕັ້ງຜັນຂະຫຍາຍແນວທາງການຕ່າງປະເທດທີ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກວາງອອກ, ສືບຕໍ່ເປີດກວ້າງການພົວພັນດ້ານພັກກັບຕ່າງປະເທດ ຍູ້ແຮງການທູດປະຊາຊົນ, ຍາດແຍ່ງຂົນຂວາຍການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກເພື່ອນມິດທັງໃກ້ ແລະ ໄກ.

## IV. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ ຄຕພ

### 1. ພິທີປະກາດຮັບຮອງ ຄະນະຊາວໜຸ່ມ 4 ບຸກ ຄັ້ງທີ 2 ໃຫ້ແກ່ ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ




ວັນທີ 11 ສິງຫາ 2022, ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ມີພິທີປະກາດຮັບຮອງຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ 4 ບຸກ ຄັ້ງທີ 2 ໃຫ້ແກ່ ຄະນະຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ, ໂດຍການເຂົ້າຮ່ວມຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ມອນໄຊ ລາວມົວຊົ່ງ, ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ; ມີບັນດາສະຫາຍເລຂາໜ່ວຍພັກອ້ອມຂ້າງ ຄຕພ, ຕາງ

ໜ້າຈາກສະຫະພັນກຳມະບານ ແລະ ແມ່ຍິງ ຄຕພ, ສະມາຊິກຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ. ຕາງໜ້າຄະນະບໍລິຫານງານຊາວໜຸ່ມ ຄຕພ ໄດ້ຂຶ້ນຜ່ານບົດສະຫຼຸບ ການເຄື່ອນໄຫວຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2020 ເຊິ່ງສາມາດປະເມີນທັງ 4 ດ້ານ ຄື: ດ້ານແນວຄິດ, ດ້ານຝຶກຝົນຫຼໍ່ຫຼອມຮໍ່າຮຽນ, ດ້ານວຽກງານການຈັດຕັ້ງ ແລະ ດ້ານວິຊາຊີບ-ສ້າງວຽກເຮັດງານທຳ ເຊິ່ງປະຕິບັດໄດ້ ສະເລ່ຍ 91%, ເຫັນວ່າຄົບມາດຖານເງື່ອນໄຂທີ່ ຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ວາງອອກ, ຈຶ່ງ ຕົກລົງມອບໃບຢັ້ງຢືນຊາວໜຸ່ມ 4 ບຸກ ໃຫ້ແກ່ ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ເປັນຄັ້ງທີ 2.

ໃນໂອກາດສຳຄັນນີ້, ສະຫາຍ ທອງສະຫວັນ ພົມວິຫານ ແລະ ສະຫາຍ ມອນໄຊ ລາວມົວຊື່ງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດ ຂອງ ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ຍາດມາໄດ້ ເຊິ່ງເປັນພື້ນຖານອັນສຳຄັນໃນການສືບຕໍ່ສູ້ຊົນຍາດໄດ້ນາມມະຍົດຊາວໜຸ່ມ 4 ບຸກ ຄັ້ງທີ 3 ປະຈຳປີ 2021 ແລະ ທຸງໄຊນຳໜ້າຂະບວນການ 4 ບຸກ ຂອງສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ໃນຕໍ່ໜ້າ; ເນັ້ນໜັກໃຫ້ ສະມາຊິກຊາວໜຸ່ມ ຄຕພ ສືບຕໍ່ເອົາໃຈໃສ່ໃນການຝຶກຝົນຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ, ເຕັກໂນໂລຊີຂໍ້ມູນຂ່າວສານ, ພາສາຕ່າງປະເທດ, ສ້າງວິຊາ ການມີອາຊີບ; ຊຸກຍູ້ສ້າງສາຍພົວພັນຮ່ວມມື, ຍາດແຍ່ງກັບຊາວໜຸ່ມປະເທດເພື່ອນມິດຍຸດທະສາດ, ເຊີດຊູ ແລະ ຮັກສາມູນເຊື້ອອັນດີງາມຂອງພັກ, ຂອງຊາດ, ຂອງຊາວໜຸ່ມລາວ.

## 2. ຄະນະບໍລິຫານງານຊາວໜຸ່ມ ຄຕພ ຈັດສຳມະນາຫົວຂໍ້ສະເພາະ ແລະ ກອງປະຊຸມສາກົນ ແບບຈຳລອງ



ວັນທີ 25 ສິງຫາ 2022, ຄະນະບໍລິຫານງານຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດສຳມະນາຫົວຂໍ້ສະເພາະ “ບົດຮຽນການເຄື່ອນໄຫວການທູດປະຊາຊົນ” ແລະ ກອງປະຊຸມສາກົນຈຳລອງ. ໃຫ້ກຽດເຂົ້າຮ່ວມໂດຍ ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ປະທານກວດກາຄະນະພົວພັນຕ່າງປະເທດສູນກາງພັກ; ມີ ສະຫາຍ ບຸນຍັງ ໄຊຊະນະວົງ, ອະດີດເອກອັກຄະລັດຖະທູດລາວ ປະຈຳມົງໂກລີ, ອະດີດຫົວໜ້າກົມພົວພັນສາກົນ ຂອງອົງການຈັດຕັ້ງມະຫາຊົນ, ຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍ ຜູ້ຕາງໜ້າສະຫະພັນກຳມະບານ ແລະ ສະຫະພັນແມ່ຍິງ ຄຕພ ແລະ ສະມາຊິກຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງເປັນຂະບວນຟົດຟື້ນ.

ສະຫາຍ ບຸນຍັງ ໄຊຊະນະວົງ ໄດ້ໃຫ້ກຽດແລກປ່ຽນບົດຮຽນການເຄື່ອນໄຫວການທູດປະຊາຊົນ ໂດຍຍົກໃຫ້ເຫັນ ຂໍ້ສະດວກ ແລະ ສິ່ງທ້າທາຍຕ່າງໆທີ່ຕ້ອງໄດ້ເອົາໃຈໃສ່ ເພື່ອໃຫ້ສາມາດເຄື່ອນໄຫວວຽກງານຢ່າງຖືກຕ້ອງ, ສອດຄ່ອງກັບແນວທາງນະໂຍບາຍການຕ່າງປະເທດຂອງພັກເຮົາ ທັງໃຫ້ຍາດແຍ່ງໄດ້ການສະໜັບສະໜູນໃນເວທີສາກົນ ກໍຄືການຍາດແຍ່ງທຶນຮອນຈາກຕ່າງປະເທດ ມາຊ່ວຍສ້າງສາພັດທະນາປະເທດຊາດຂອງພວກເຮົາ. ຫຼັງຈາກນັ້ນ, ໄດ້ດຳເນີນກອງປະຊຸມສາກົນຈຳລອງ ໃນຫົວຂໍ້ "ລະບຽບໂລກໃໝ່" ແລະ "ການຫັນເປັນດີຈີຕ້ອນ" ໂດຍການນຳສະເໜີຂອງ 6 ໜ່ວຍຊາວໜຸ່ມ, ຄະນະບໍລິຫານງານຊາວໜຸ່ມ ຄຕພ.

ໃນຕອນທ້າຍ, ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ປະທານກວດກາຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ມີຄຳເຫັນສະແດງຄວາມຊົມເຊີຍ ຕໍ່ຄວາມຄິດລິເລີ່ມທີ່ດີຂອງຄະນະບໍລິຫານງານຊາວໜຸ່ມ ຄຕພ ໃນການຈັດກິດຈະກຳ ເພື່ອພັດທະນາສະມາຊິກຊາວໜຸ່ມຂອງຕົນ ແລະ ເຫັນຄວນສືບຕໍ່ກິດຈະກຳລັກສະນະນີ້ ໃຫ້ໄດ້ດີກວ່າເກົ່າ ໃນຕໍ່ໜ້າ.